ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ 02 31 /PTL/2018

ນະຄອນຫຼວງວຽງຈັນ, ວັນທີ 29 ສິງຫາ 2018

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 6/2018

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 007/ຄຄຊ, ລົງວັນທີ 03/4/2014.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 22/ຕລຊລ, ລົງວັນທີ07/1/2011.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ("ບໍລິສັດ" ຫຼື "ປທລ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 6/2018 ວັນທີ 29 ສິງຫາ 2018, ເວລາ 14:00ໂມງ ທີ່ຫ້ອງປະຊຸມ ສຳນັກງານ ປທລ ໂດຍມີວາລະຮັບຮອງເອົາບັນຫາທີ່ສຳຄັນ ດັ່ງລາຍລະອຽດລຸ່ມນີ້:

ວາລະທີ 1: ຮັບຮອງເອົາ ບົດບັນທຶກກອງປະຊຸມສະພາບໍລິຫານຄັ້ງທີ່ 5/2018, ເມື່ອວັນທີ 14 ກໍລະກົດ 2018;

ວາລະທີ 2: ຮັບຮອງເອົາບົດສະຫຼຸບຜົນການດຳເນີນທຸລະກິດ ປະຈຳ 6 ເດືອນຕົ້ນປີ 2018;

ວາລະທີ 3: ຮັບຮອງເອົາບົດສະຫຼຸບທາງດ້ານການເງິນປະຈຳໄຕ 6 ເດືອນຕົ້ນປີ 2018 ທີ່ຜ່ານການກວດກາຈາກຜູ້ກວດສອບພາຍນອກ;

ວາລະທີ 4: ຮັບຮອງເອົາຮັບຮອງເອົາ ແຜນການຂາຍປະຈຳປີ 2018 ສະບັບປັບປຸງຈາກຕົວເລກແຜນປະຈຳປີ 2018 ທີ່ຮັບຮອງໃນກອງປະຊຸມສາມັນຜູ້ຖືຮຸ້ນ ຈຳນວນ 247 ລ້ານລິດ ມາເປັນ 210 ລ້ານລິດ. ການປ່ຽນແປງແຜນການຂາຍນີ້ ເນື່ອງຈາກວ່າ ລູກຄ້າໂຄງການບາງລາຍໄດ້ຢຸດເຊົາສັນຍາ ແລະ ຕາມແຜນການລູກຄ້າໂຄງການຫຼາຍລາຍຍັງບໍ່ໄດ້ຮັບການອະນຸມັດໃຫ້ມີການດຳເນີນງານ ເຊິ່ງເຮັດໃຫ້ຕົວເລກຄາດຄະເນໄດ້ຜິດຜ່ຽງໄປ. ພ້ອມດຽວກັນນີ້, ທາງການຍັງສືບຕໍ່ບໍ່ອະນຸມັດໃຫ້ມີການກໍ່ສ້າງສະຖານີບໍລິການໃໝ່ເພີ່ມຕື່ມຕໍ່ຈາກປີ 2017 ຈຶ່ງເຮັດໃຫ້ຕົວເລກຄາດການຈາກການຂາຍ ຜ່ານສະຖານີບໍລິການ ບໍ່ເປັນໄປຕາມແຜນການ. ນອກນີ້, ລູກຄ້າບາງລາຍເຊິ່ງປະສົບບັນຫາທາງດ້ານການເງິນ ເຊິ່ງອາດຈະກໍ່ໃຫ້ເກີດໜີ້ສິນທວງຍາກ ດັ່ງນັ້ນ ຜູ້ບໍລິຫານຈຶ່ງໄດ້ທົບທວນຄືນແນວທາງໃນການຈັດຈຳໜ່າຍ ແລະ ປັບປ່ຽນຕົວເລກແຜນການຂາຍຂອງປີ 2018 ລົງ.

ດັ່ງນັ້ນ ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ.

ດ້ວຍຄວາມເຄົາລົບນັບຖືຢ່າງສູງ
ປະທານສະພາບໍລິຫານ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ຈັນທອນ ສິດທິໄຊ